## ປະທານປະເທດຫວຽດນາມຢ້ຽມຢາມລາວຢ່າງເປັນທາງການ.

*(ປຊຊ): ໂດຍຕອບສະໜອງຕາມຄຳເຊີນຂອງສະຫາຍ ຈູມມະລີ ໄຊຍະສອນ, ປະທານປະເທດແຫ່ງ ສປປ ລາວ, ສະຫາຍ ຫງວຽນ ມິງ ຈຽດ ປະທານປະເທດແຫ່ງສສ ຫວຽດນາມ ພ້ອມພັນລະຍາ ແລະ ຄະນະໄດ້ເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການໃນຕອນເຊົ້າວັນທີ 24 ສິງຫາ 2010 ນີ້ ພິທີຕອນຮັບຢ່າງເປັນທາງການໄດ້ຈັດຂຶ້ນຢ່າງຄຶກຄື້ນ ແລະ ສົມກຽດທີ່ຫໍຄຳ ໂດຍສະຫາຍ ຈູມມະລີ ໄຊຍະສອນ ປະທານປະເທດ ພ້ອມພັນລະຍາ ໃຫ້ກຽດຕ້ອນຮັບ. ໃນພິທີສະຫາຍ ຈູມມະລີ ໄຊຍະສອນ ໄດ້ນຳພາ ສະຫາຍ ຫງວຽນ ມິງ ຈຽດ ຂຶ້ນແທນກຽດຕີຍົດເຄົາລົບທຸງຊາດ ຫວຽດນາມ, ລາວ ຕາມລຳດັບ, ຫຼັງຈາກນັ້ນປະມຸກລັດທັງສອງ ກໍ່ໄດ້ເດີນກວດແຖວກອງກຽດຕິຍົດກອງທັບປະຊາຊົນລາວ ແລະ ສຳຜັດມືກັບບັນດາສະຫາຍໃນຄະນະລັດຖະບານ, ສະພາແຫ່ງຊາດ ຜູ້ຕ່າງໜ້າອົງການຈັດຕັ້ງມະຫາຊົນຂອງລາວ ແລະ ພະນັກງານຂັ້ນສູງຈາກສະຖານທູດ ຫວຽດນາມ ທີ່ເຂົ້າຮ່ວມໃນພິທີຕອນຮັບ, ຈາກນັ້ນປະມຸກລັດຂອງທັງສອງປະເທດ ພ້ອມຄະນະທາງການຂອງທັງສອງຝ່າຍ ກໍ່ໄດ້ເຂົ້າຮ່ວມພົບປະທາງການສອງຝ່າຍຊຶ່ງຈັດຂຶ້ນທີ່ຫໍຄຳ.

ໃນການພົບປະສອງຝ່າຍ ສະຫາຍ ຈູມມະລີ ໄຊຍະສອນ ປະທານປະເທດແຫ່ງ ສປປ ລາວ ຕີລາຄາສູງ ແລະ ສະແດງຄວາມຂອບໃຈຕໍ່ສະຫາຍ ຫງວຽນ ມິງ ຈຽດ ພ້ອມພັນລະຍາ ແລະ ຄະນະທີ່ໄດ້ນຳເອົາ ໄມຕີຈິດມິດຕະພາບອັນດູດດື່ມ ແລະ ຄວາມຮັກແພງອັນສະໜິດສະໜົມຂອງພັກ-ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງມາຍັງພັກ-ລັດ ແລະ ປະຊາຊົນລາວແລະ ຖືວ່າການລົງຢ້ຽມຢາມລາວຂອງ ຫວຽດນາມຢູ່ ສປປ ລາວ ໃນຄັ້ງນີ້ ເປັນການປຸກລະດົມກຳລັງໃຈອັນໃຫ່ຍຫຼວງໃຫ້ແກ່ ພັກ-ລັດ ແລະ ປະຊາຊົນໃນການປະຕິບັດມະຕິ 8 ຂອງພັກ ກະກຽມເຂົ້າສູ່ກອງປະຊຸມໃຫ່ຍຂອງພັກຄັ້ງທີ່ IX

ເຊື່ອໝັ້ນຢ່າງໜັກແໜ້ນວ່າການລົງຢ້ຽມຢາມຄັ້ງນີ້ ຈະເປັນການປະກອບສ່ວນສຳຄັນຍິ່ງ ເຂົ້າໃນການເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫ່ວາງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ອ້າຍນ້ອງທີ່ມີມູນເຊື້ອອັນດີງາມຍນັ້ນໃຫ້ນັບມື້ມີຄວາມແໜ້ນແຟ້ນ, ຈະເລີນງອກງາມ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ສະຫາຍ ຈູມມະລີ ໄຊຍະສອນ ຍັງໄດ້ຕີລາຄາສູງ ແລະສະອດງຄວາມຊົມເຊີຍເປັນຢ່າງຍິ່ງ ຕໍ່ຜົນການພັດທະນາເສດຖະກິດ-ສັງຄົມ ຂອງ ສສ ຫວຽດນາມ ພາຍໃຕ້ການນຳພາການສະຫລາດສ່ອງໃສ່ ແລະ ຖືກຕ້ອງຂອງພັກກົມມູນິດຫວຽດນາມ, ໂດຍສະເພາະແມ່ນການທີ່ລັດຖະບານຫວຽດນາມ ໄດ້ມີມາດຕະການຕົງຈິງໃນການຜ່ານຜາວິກິດການ ການເງິນໃນປີ 2009, ສາມາດຮັກສາລະດັບຂອງການຈະເລີນເຕີບໂຕຂອງ GDP 6 ເດືອນຕົ້ນປີ 2010 ໄວ້ໄດ້ເຖິງ 6,16% ລື່ນຄາດໝາຍທີ່ໄດ້ຕັ້ງໄວ້. ພ້ອມດຽວກັນກໍ່ຂໍສະແດງຄວາມຊົມເຊີຍບົດບາດອັນພົ້ນເດັ່ນຂອງ ສສ ຫວຽດນາມ ໃນເວທີສາກົນ, ໂດນສະເພາະການເປັນປະທານ ອາຊຽນ ແລະ ເປັນປະທານຫຼາຍໆກອງປະຊຸມທີ່ສຳຄັນໃນປີ 2010 ນີ້, ຈາກນັ້ນໄດ້ສະແດງສະພາບການຢູ່ ສປປ ລາວ ໂດຍລວມແມ່ນສືບຕໍ່ມີຄວາມສະຫງົບປົກກະຕິ ແລະ ສະຖຽນລະພາບທາງດ້ານການເມືອງ.

ສຳລັບໜຶ່ງປີຜ່ານມານີ້, ການພັດທະນາເສດຖະກິດ-ສັງຄົມ ຂອງລາວໄດ້ມີການຊັກຊ້າ ອັນເນື່ອງມາຈາກວິກິດການຖົດຖອຍທາງດ້ານເສດຖະກິດ ແລະ ການເງິນຂອງໂລກ, ແຕ່ເສດຖະກິດຍັງຮັກສາໄດ້ຈັງຫວະເພີ່ມຂຶ້ນຢ່າງຕໍ່ເນື່ອງ.

+ ປີ 2009 ຍອດຜະລິດຕະພັນພາຍໃນເພີ່ມຂຶ້ນ 7,6% ທຽບໃສ່ປີ 2008 GDP ສະເລຍຕໍ່ຫົວຄົນບັນລຸ 906 ໂດລາອັດຕາເງິນເຟີ້ ສະເລ່ຍໝັດປີໃນລະດັບຕ່ຳກ່ວາ 5%.

+ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ກໍ່ມີບາດກ້າວທີ່ຕັ້ງໜ້າຂຶ້ນ, ຄອບຄົວທີ່ທຸກຍາກຫຼຸດລົງຈາກ 21% ໃນປີ 2009.

+ ບັນຍາກາດການລົງທຶນຍັງສືບຕໍ່ມີຄວາມຟົດຟື້ນ, ການລົງທຶນຂອງຕ່າງປະເທດກໍ່ຍັງຮັກສາຈັງຫວະເພີ່ມຂຶ້ນດີຢູ່.

ປີ 2010 ແມ່ນປີມ້ວນທ້າຍປີຂອງການຈັດຕັ້ງ ມະຕິ 8 ຂອງພັກ ແລະ ແ ຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 6 ໄລຍະ 2006-2010, ຊຶ່ງການຈັດຕັ້ງປະຕິບັດ ວຽກງານຕ່າງໆ ໄດ້ຕິດພັນກັບວັນສຳຄັນຂອງຊາດ ເຊັ່ນ: ວັນສ້າງຕັ້ງພັກຄົບຮອບ 55 ປີ, ວັນຊາດ ທີ 2 ທັນວາ ຄົບຮອບ 35 ປີ, ວັນເກີດທ່ານ ໄກສອນ ພົມວິຫານ ຄົບຮອບ 90 ປີ, ວັນສ້າງຕັ້ງນະຄອນຫຼວງວຽງຈັນຄົບຮອບ 450 ປີ ແລະ ວັນສຳຄັນອື່ນໆ ເພື່ອຂໍ່ານັບຮັບຕອນກອງປະຊຸມໃຫ່ຍຄັ້ງທີ່ IX ຂອງພັກ.

ການພົບປະລະຫວ່າງປະມຸກລັດລາວ ແລະ ຫວຽດນາມ ໃນຄັ້ງນີ້, ໄດ້ສ້າງພື້ນຖານອັນໜັກແໜ້ນຕື່ມອີກ ໃຫ້ແກ່ການເພີ່ມທະວີສາຍພົວພັນອັນສະໜິດແໜ້ນ, ການພົວພັນຮ່ວມມືແບບຍຸດທະສາດຮອບດ້ານອັນໝັ້ນຄົງຍາວນານ, ທັງເປັນການໃຫ້ທິດຊີ້ນຳ ແລະ ຊຸກຍູ້ໃຫ້ບັນດາພາກສ່ວນກ່ຽວຂ້ອງທັງສອງຝ່າຍ ນຳໄປຈັດຕັ້ງຜັນຂະຫຍາຍໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ ເພື່ອຜົນປະໂຫຍດອັນຍາວນານຂອງປະຊາຊົນສອງຊາດ.

ໃນຕອນແລງຂອງວັນດຽວກັນ ສະຫາຍ ຫງວຽນມິງຈຽດ ແລະ ພັນລະຍາ ພ້ອມຄະນະໄດ້ເຂົ້າຮ່ວມພິທີ ເປີດຫ້ອງການຊົ່ວຄາວຂອງ ຜູ້ຕ່າງໜ້າສະຖານີວິທະຍຸກະຈາຍສຽງ ສສ ຫວຽດນາມ ປະຈຳລາວຢ່າງເປັນທາງການ ແລະ ໃນຕອນຄ່ຳສະຫາຍປະທານປະເທດ ສສ ຫວຽດນາມ ພ້ອມພັນລະຍາ ແລະ ຄະນະໄດ້ເຂົ້າຮ່ວມງານລ້ຽງຮັບຮອງ ເຊິ່ງຈັດໂດຍສະຫາຍປະທານປະເທດແຫ່ງ ສປປ ລາວ ແລະ ພັນລະຍາທີ່ຫ້ອງວ່າການສູນກາງພັກ ປະຊາຊົນ ປະຕິວັດລາວ ຈົນຮອດເວລາອັນຄວນຈຶ່ງໄດ້ກັບໄປຮອດທີ່ພັກ.